ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ
ພະແນກອຸດສາຫະກຳ ແລະ ການຄ້າ

1345
ເລກທີ............./ອຄ.ນວ.ຄພນ
ນະຄອນຫຼວງວຽງຈັນ, ວັນທີ....21.... ກັນຍາ 2021

## ແຈ້ງການແນະນຳ

ເຖິງ: - ຫ້ອງການອຸດສາຫະກຳ ແລະ ການຄ້າ 09 ຕົວເມືອງ ໃນນະຄອນຫຼວງວຽງຈັນ.
- ຜູ້ອຳນວຍການ, ຜູ້ຈັດການ, ເຈົ້າຂອງວິສາຫະກິດ ບໍລິສັດຂາອອກ-ຂາເຂົ້າ, ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານຄ້າຊຸບເປີມາກ-ມິນິມາກ, ຕະຫຼາດ, ຮ້ານຄ້າຂາຍຍົກ-ຂາຍຍ່ອຍທົ່ວໄປ ແລະ ປ້ຳນ້ຳມັນເຊື້ອໄຟຢູ່ນະຄອນຫຼວງວຽງຈັນ.
- ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າ ທີ່ຢູ່ໃນນະຄອນຫຼວງວຽງຈັນ.

ເລື່ອງ: ປະຕິບັດ ບັນດາມາດຕະການເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດໂຄວິດ-19 (COVID-19) ແລະ ການບໍລິການ ຊື້-ຂາຍ ສິນຄ້າ ອຸປະໂພກ, ບໍລິໂພກ ແລະ ເຄື່ອງໃຊ້ສອຍປະຈຳວັນ ທີ່ຈຳເປັນ ໃນໄລຍະ ແຕ່ວັນທີ 21 - 30 ກັນຍາ 2021.

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21.04.2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 (COVID-19).
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1177 /ຫສນຍ, ລົງວັນທີ 15 ກັນຍາ2021 ກ່ຽວກັບ ການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ການລະບາດຂອງພະຍາດ COVID-19 ໃນໄລຍະ ວັນທີ 16 ຫາ 30 ກັນຍາ 2021.
- ອີງຕາມ ຄຳສັ່ງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 016/ຈນວ, ລົງວັນທີ 19 ກັນຍາ 2021 ວ່າດ້ວຍ ມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ ແຕ່ວັນທີ 19 - 30 ກັນຍາ 2021.

ໂດຍຕາມການປະເມີນຂອງຄະນະສະເພາະກິດຂັ້ນນະຄອນຫລວງວຽງຈັນ ເຫັນວ່າສະພາບການສະໜອງສິນຄ້າ ແລະ ການກະຈາຍສິນຄ້າຍັງມີຄວາມແອອັດ ຊຶ່ງຈະບໍ່ສາມາດປະຕິບັດໄດ້ຕາມມາດຕະການການຄວບຄຸມ ແລະ ການແຜ່ລະບາດຂອງພະຍາດ COVID-19 ຢູ່ນະຄອນຫລວງວຽງຈັນ.

ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫລວງວຽງຈັນ ອອກແຈ້ງການແນະນຳເພີ່ມເຕີມໃຫ້ປະຕິບັດດັ່ງນີ້:

1. ເລີ່ມແຕ່ວັນທີ 21 - 30 ກັນຍາ 2021 ໃຫ້ບັນດາຫົວໜ່ວຍວິສາຫະກິດ ບໍລິສັດຂາອອກ-ຂາເຂົ້າ, ຮ້ານສັບພະສິນຄ້າ ຮ້ານຄ້າຊຸບເປີມາກ-ມິນິມາກ, ຕະຫຼາດ, ຮ້ານຄ້າຂາຍຍົກ-ຂາຍຍ່ອຍທົ່ວໄປ ແລະ ປ້ຳນ້ຳມັນເຊື້ອໄຟຢູ່

ນະຄອນຫຼວງວຽງຈັນ ທີ່ເຄື່ອນໄຫວດຳເນີນທຸລະກິດເປັນປົກກະຕິ ບໍລິການ ເຄື່ອງອຸປະໂພກ, ບໍລິໂພກ ແລະ ເຄື່ອງໃຊ້ສອຍປະຈຳວັນທີ່ຈຳເປັນ ອອກຈຳໜ່າຍໃຫ້ຜູ້ຊົມໃຊ້ ແລະ ພຽງພໍກັບຄວາມຕ້ອງການ;

2. ສຳລັບຢູ່ເຂດບ້ານແດງ: ແມ່ນໃຫ້ປະຕິບັດຕາມແຈ້ງການຂອງກະຊວງສາທາລະນະສຸກ ເລກທີ 0488/ສທ, ລົງວັນທີ 20/5/2021 ວ່າດ້ວຍການກຳນົດເຂດການລະບາດເພື່ອປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດ ໂຄວິດ 19.

3. ໃຫ້ປະຕິບັດ ໃນຂອດບໍລິການຊື້-ຂາຍ ດັ່ງນີ້:

- ເປີດ : ບໍລິສັດຂາອອກ-ຂາເຂົ້າ ທີ່ເຮັດການນຳເຂົ້າສິນຄ້າອຸປະໂພກ ແລະ ບໍລິໂພກ: ໃນສຳນັກງານຫ້ອງການ, ລະບົບສາງ ໂດຍໃຫ້ມີການຈັດຕັ້ງແປງຜູ້ມາປະຈຳການ ແລະ ການປ້ອງກັນເວນຍາມ.
- ສຳລັບ ຮ້ານສັບພະສິນຄ້າ, ຮ້ານຊຸບເປີມາເກັດ, ຮ້ານມິນິມາກ ແລະ ຮ້ານຄ້າຂາຍຍ່ອຍ ທີ່ຕັ້ງຢູ່ໃນ ຫຼື ນອກສູນການຄ້າທີ່ຈຳໜ່າຍເຄື່ອງອຸປະໂພກ-ບໍລິໂພກ, ອາຫານແຫ້ງ, ອາຫານສຳເລັດຮູບ, ຮ້ານຂາຍຢາ, ຮ້ານຂາຍອຸປະກອນການແພດ,ເຄື່ອງໃຊ້ໃນຄົວເຮືອນ ແລະ ສິນຄ້າກະສິກຳ ແມ່ນໃຫ້ເປີດບໍລິການຕາມເຂດ, ເວລາທີ່ກຳນົດໃຫ້ ແຕ່ໃຫ້ປະຕິບັດມາດຕະການປ້ອງກັນການລະບາດຂອງພະຍາດ COVID-19 ຢ່າງເຂັ້ມງວດ ເປັນຕົ້ນ ຢູ່ທາງເຂົ້າ ໃຫ້ຈັດພະນັກງານເພື່ອວັດແທກອຸນຫະພູມ, ມີນ້ຳຢາລ້າງມືແບບລ້າງແຫ້ງ ຫຼື ລ້າງມືແບບປຽກ, ໃສ່ຜ້າປິດປາກ-ດັງ, ໃຫ້ຈຳກັດຄົນທີ່ເຂົ້າມາໃນຮ້ານ ບໍ່ໃຫ້ເຂົ້າບາດດຽວ, ການເລາະຊື້ໃຫ້ຢູ່ຫ່າງກັນ ຢ່າງໜ້ອຍ 01 ແມັດຂຶ້ນໄປ, ການຕັ້ງໂຕະຂາຍສິນຄ້າ ໃຫ້ຫ່າງກັນ 01 ແມັດ ໃຫ້ປະຕິບັດຫຼັກການຄວາມສະອາດ, ພາຍໃນຮ້ານໃຫ້ມີອາກາດຖ່າຍເທສະດວກ, ບໍ່ໃຫ້ ຈັດກິດຈະກຳທຸກປະເພດ.
- ອະນຸຍາດໃຫ້ເປີດການຊື້-ຂາຍເຄື່ອງອຸປະໂພກ-ບໍລິໂພກ ດ້ວຍການຈັດຊື້, ຈັດສົ່ງ ແລະ ຮັບເອົາ ທີ່ຮັບປະກັນການປ້ອງກັນການແຜ່ເຊື້ອພະຍາດໄດ້.
- ການກຳນົດໂມງ ເວລາໃຫ້ ເປີດ-ປິດ ການບໍລິການຄືດັ່ງນີ້:
  - ຕະຫຼາດ ອະນຸຍາດໃຫ້ເປີດແຕ່ 6:00 ໂມງ -19 :00 ໂມງ;
  - ຮ້ານສັບພະສິນຄ້າ ອະນຸຍາດໃຫ້ເປີດແຕ່ 9:00 ໂມງ - 20 :00 ໂມງ;
  - ຮ້ານຊຸບເປີມາເກັດ 9:00 ໂມງ - 20:00 ໂມງ;
  - ຮ້ານມິນິມາກ 9:00 ໂມງ - 20:00 ໂມງ;
  - ຮ້ານຄ້າຂາຍຍ່ອຍ 9:00 ໂມງ - 20:00 ໂມງ;
  - ຮ້ານຄ້າຂາຍຍົກ ອະນຸຍາດໃຫ້ເປີດແຕ່ 9:00 ໂມງ - 20:00 ໂມງ.
- ຕະຫຼາດ: ແມ່ນໃຫ້ເປີດຂາຍສະເພາະແຕ່ຮ້ານຄ້າທີ່ຂາຍສິນຄ້າປະເພດ: ສິນຄ້າກະສິກຳ, ຮ້ານຂາຍເຄື່ອງຍ່ອຍ(ເຄື່ອງແຫ້ງ), ອາຫານຊື້ກັບບ້ານ, ສ່ວນການບໍລິການ ຫຼື ຮ້ານຂາຍສິນຄ້າປະເພດອື່ນໆ ແມ່ນໃຫ້ປິດຮ້ານຊົ່ວຄາວຕາມກຳນົດເວລາຂ້າງເທິງນີ້.
- ປ້ຳນ້ຳມັນເຊື້ອໄຟ: ແມ່ນໃຫ້ເປີດບໍລິການຕາມປົກກະຕິ ແຕ່ໃຫ້ເຂັ້ມງວດການປະຕິບັດມາດຕະການປ້ອງກັນເຊື້ອພະຍາດໂຄວິດ-19.
- ປິດ : ໃຫ້ປິດຕະຫຼາດກາງຄືນ, ສູນການຄ້າ ທີ່ໃຫ້ບໍລິການຈຳໜ່າຍກ່ຽວກັບສິນຄ້າບາງປະເພດເຊັ່ນ: ເຄື່ອງນຸ່ງຫົ່ມ, ເຄື່ອງກໍ່ສ້າງ, ເຄື່ອງໃຊ້ຄົວເຮືອນ, ເຄື່ອງສຳອາງ ແລະ ສິນຄ້າ ທີ່ເຫັນວ່າບໍ່ມີຄວາມຈຳເປັນ ນຳໃຊ້ເຂົ້າໃນຊີວິດປະຈຳວັນ.

4. ທຸກຫົວໜ່ວຍວິສາຫະກິດ ທີ່ດຳເນີນທຸລະກິດການຈຳໜ່າຍສິນຄ້າ ໃຫ້ປະຕິບັດມາດຕະການປ້ອງກັນ ຢ່າງເຂັ້ມງວດ, ຜູ້ໃຫ້ບໍລິການຕ້ອງໄດ້ຮັບວັກຊີນຄົບໂດສ ແລະ ຕ້ອງໄດ້ຂໍອະນຸຍາດການເຂົ້າ-ອອກນຳອຳນາດການປົກຄອງບ້ານ.

5. ຫ້າມສວຍໂອກາດຂຶ້ນລາຄາສິນຄ້າ ແລະ ຄ່າບໍລິການ ຕາມລຳພັງໃຈ, ກັກຕຸນສິນຄ້າ ທີ່ເປັນການເອົາປຽບຜູ້ບໍລິໂພກໂດຍບໍ່ຊອບທຳ ແລະ ຈຳໜ່າຍສິນຄ້າທີ່ບໍ່ປອດໄພທາງດ້ານຄຸນນະພາບເປັນອັນຂາດ. ການຈຳໜ່າຍສິນຄ້າໃຫ້ຜູ້

ຊົມໃຊ້ໃນແຕ່ລະຄັ້ງແມ່ນໃຫ້ຕອບສະໜອງໃນປະລິມານທີ່ເໝາະສົມ, ບໍ່ໃຫ້ຜູ້ຊົມໃຊ້ຊື້ສິນຄ້າເປັນຈຳນວນຫຼາຍ ເພື່ອໄປກັກຕຸນ. ຫ້າມຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ ແລະ ຫ້າມຊື້-ຂາຍຊະຊາຍຕາມແຄມທາງ ແລະ ທາງຖະໜົນ, ເສັ້ນທາງ, ຂາຍນອກສະຖານທີ່ ທີ່ບໍ່ໄດ້ຮັບອະນຸຍາດຢ່າງເດັດຂາດ; ຖ້າບຸກຄົນ, ນິຕິບຸກຄົນ ແລະ ຫົວໜ່ວຍວິສາຫະກິດໃດ ຫາກມີການລະເມີດ ແມ່ນຈະຖືກປະຕິບັດມາດຕະການປັບໃໝ ຫຼື ມອບໃຫ້ເຈົ້າໜ້າທີ່ ເພື່ອລົງໂທດຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງແລ້ວແຕ່ກໍລະນີ, ກ້າວໄປເຖິງການຖອນໃບອະນຸຍາດດຳເນີນທຸລະກິດ ແລະ ໃຫ້ປິດກິດຈະການດັ່ງກ່າວຢ່າງຖາວອນ; ສຳລັບຫົວໜ່ວຍວິສາຫະກິດໃດ ທີ່ໄດ້ລະເມີດມາດຕະການປ້ອງກັນພະຍາດໂຄວິດ-19, ໂດຍບໍ່ມີການຕັ້ງຈຸດກວດກາຢູ່ບໍລິເວນທາງເຂົ້າ, ບໍ່ມີການວັດແທກອຸນນະພູມ, ບໍ່ມີນ້ຳຢາລ້າງມືແບບລ້າງແຫ້ງ ຫຼື ລ້າງມືແບບປຽກ ຫຼື ບໍ່ແນະນຳໃຫ້ໃສ່ຜ້າປິດປາກ-ດັງ ແມ່ນຈະຖືກປັບໃໝ 10.000.000 ກີບ/ຄັ້ງ; ຖ້າບຸກຄົນໃດ ບໍ່ປະຕິບັດຕາມຂັ້ນຕອນ ແລະ ມາດຕະການປ້ອງກັນພະຍາດໂຄວິດ-19 ທີ່ຜ່ານຈຸດທາງເຂົ້າ ຮ້ານສັບພະສິນຄ້າ, ຮ້ານຄ້າຊຸບເປີມາກ-ມີນິມາກ, ຕະຫຼາດ, ຮ້ານຄ້າຂາຍຍົກ-ຂາຍຍ່ອຍທົ່ວໄປ(ເປັນຕົ້ນ ການວັດແທກອຸນຫະພູມ, ລ້າງມືແບບລ້າງແຫ້ງ ຫຼື ລ້າງມືແບບປຽກ, ໃສ່ຜ້າປິດປາກ-ດັງ, ການເລາະຊື້ໃຫ້ຢູ່ຫ່າງກັນ ຢ່າງໜ້ອຍ 01 ແມັດຂຶ້ນໄປ) ແມ່ນຈະຖືກປັບໃໝ 3.000.000 ກີບ/ຄົນ/ຄັ້ງ.

6. ບໍ່ຕິດປ້າຍລາຄາສິນຄ້າ, ແຈ້ງຂໍ້ມູນບໍ່ຖືກຕ້ອງກັບຄວາມຈິງກ່ຽວກັບໂຄງປະກອບລາຄາ ຫຼື ຄັງແຮສຳຮອງ, ບໍ່ແຈ້ງໂຄງປະກອບລາຄາ, ນຳເອົາສິນຄ້າໃນຄັງແຮອອກຈຳໜ່າຍໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະຄຸ້ມຄອງລາຄາ, ຢຸດ-ປະຕິເສດ ຫຼື ແກ່ຍາວເວລາການຈຳໜ່າຍສິນຄ້າ ຫຼື ການບໍລິການ ໂດຍບໍ່ມີເຫດຜົນ, ນຳໃຊ້ໂຄງປະກອບລາຄາໂດຍບໍ່ໄດ້ຮັບອະນຸຍາດ ແລະ ບັນດາຂໍ້ຫ້າມອື່ນໆທີ່ກຳນົດໄວ້ໃນຂໍ້ 4 ຂອງແຈ້ງການແນະນຳສະບັບນີ້ ໃຫ້ປັບໃໝແຕ່: 500.000 ກີບ - 5.000.000 ກີບ/ຄັ້ງ/ລາຍການ.

7. ແຈ້ງການແນະນຳ ສະບັບນີ້ ປ່ຽນແທນ ແຈ້ງການສະບັບເລກທີ 1323/ອຄ.ນວ.ຄພນ, ລົງວັນທີ 19/9/2021 ແລະ ນຳໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງການແນະນຳມາຍັງບັນດາທ່ານເພື່ອຮັບຊາບ ແລະ ເປັນເອກະພາບກັນໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

ຫົວໜ້າພະແນກ

ພະແນກອຸດສາຫະກຳ ແລະ ການຄ້າ
ກະຊວງອຸດສາຫະກຳ ແລະ ການຄ້າ
ນະຄອນຫຼວງວຽງຈັນ

ນ. ວັນນະນີ ພົມມະສານ

**ບ່ອນສົ່ງ:**

- ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອລາຍງານ
- ກົມການຄ້າພາຍໃນ ກະຊວງ ອຄ ເພື່ອລາຍງານ
- ທ່ານເຈົ້າເມືອງ 9 ຕົວເມືອງ ເພື່ອຊາບ ແລະ ຊີ້ນຳ ໃນການຈັດຕັ້ງປະຕິບັດ
- ຫ້ອງວ່າການປົກຄອງ ນະຄອນຫລວງວຽງຈັນ ເພື່ອລາຍງານ
- ຫ້ອງການ ປກສ ນວ ເພື່ອລາຍງານ ແລະ ຈັດຕັ້ງປະຕິບັດ.
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເພື່ອກວດກາ ແລະ ປະຕິບັດ
- ນາຍບ້ານ ທີ່ມີຫົວໜ່ວຍວິສາຫະກິດຕັ້ງຢູ່ ເພື່ອຕິດຕາມກວດກາ, ປະຕິບັດ ແລະ ລາຍງານ



ສແກນດ້ວຍ Cam